# Why did Jesus Die?



## 1. Because we are all sinners!

Mark 2:17 ຄັນພຣະເຢຊູໄດ້ຍິນດັ່ງນັ້ນ ກໍຊົງກ່າວແກ່ເຂົາວ່າ, “ຄົນທີ່ສະບາຍບໍ່ຕ້ອງການຫມໍຢາ ແຕ່ຄົນເຈັບຕ້ອງການຫມໍ ເຮົາບໍ່ໄດ້ມາເພື່ອຈະເອີ້ນເອົາຄົນສິນທັມ ແຕ່ມາເອີ້ນເອົາຄົນນອກສິນທັມ”

ພຣະທັມໂຣມ 3:10 ດັ່ງມີຄໍາຂຽນໄວ້ໃນພຣະຄັມພີວ່າ, “ບໍ່ມີຄົນຊອບທັມຈັກຄົນນຶ່ງຄົນດຽວ

Matthew 18:11 ດ້ວຍວ່າບຸດມະນຸດໄດ້ມາໂຜດເອົາອັນທີ່ຫລົງເສັຽໄປນັ້ນໃຫ້ພົ້ນ

## 2. Because there is a cost for that sin!

Matthew 15:18-20 ແຕ່ສິ່ງທີ່ອອກຈາກປາກກໍອອກມາຈາກໃຈ ສິ່ງນັ້ນແຫລະ, ເຮັດໃຫ້ມະນຸດຊົ່ວມົວຫມອງ ເພາະວ່າຄວາມຄຶດຊົ່ວຮ້າຍ, ການຂ້າຄົນ, ການຫລິ້ນຊູ້ຈາກຜົວເມັຽ, ການຜິດຊາຍຍິງ, ການລັກຊັບ, ການເປັນພຍານບໍ່ຈິງ, ແລະການນິນທາ ກໍອອກມາຈາກໃຈ ສິ່ງເຫລົ່ານີ້ແຫລະ, ທີ່ເຮັດໃຫ້ມະນຸດຊົ່ວມົວຫມອງ ແຕ່ການຮັບປະທານອາຫານບໍ່ລ້າງມືກ່ອນນັ້ນ ບໍ່ໄດ້ເຮັດໃຫ້ມະນຸດຊົ່ວມົວຫມອງ”

ພຣະທັມໂຣມ 6:23 ດ້ວຍວ່າຄ່າຈ້າງຂອງຄວາມຜິດບາບກໍຄືຄວາມຕາຍ ແຕ່ຂອງພຣະຣາຊທານອັນໂຜດມາແຕ່ພຣະເຈົ້າ ກໍຄືຊີວິດອັນຕລອດໄປເປັນນິດໃນພຣະຄຣິດ ຄືພຣະເຢຊູເຈົ້າຂອງພວກເຮົາ

Mark 16:16 ຜູ້ທີ່ເຊື່ອ ແລະຮັບບັບຕິສະມາແລ້ວຈະໄດ້ພົ້ນ ແຕ່ຜູ້ທີ່ບໍ່ເຊື່ອຈະຖືກໂທດ



**There is a cost for sin!**

## 3. Because Jesus died and paid for our sins on the cross!

Matthew 1:21 ນາງຈະປະສູດບຸດ ແລ້ວເຈົ້າຈົ່ງຖວາຍນາມທ່ານວ່າ ເຢຊູ ເພາະວ່າທ່ານຜູ້ນີ້ແຫລະ, ຈະເປັນຜູ້ໂຜດໄພ່ພົນຂອງຕົນໃຫ້ລອດພົ້ນຈາກຄວາມຜິດບາບຂອງເຂົາ”

ພຣະທັມໂຣມ 5:8 ແຕ່ຝ່າຍພຣະເຈົ້າຊົງສະແດງຄວາມຮັກຂອງພຣະອົງແກ່ເຮົາທັງຫລາຍ ຄືຂນະທີ່ພວກເຮົາຍັງເປັນຄົນຜິດບາບຢູ່ນັ້ນ ພຣະຄຣິດໄດ້ຊົງຍອມສິ້ນພຣະຊົນແທນເຮົາທັງຫລາຍ

ພຣະທັມໂຢຮັນ 3:16 ເພາະວ່າພຣະເຈົ້າຊົງຮັກໂລກຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕລອດໄປເປັນນິດ

## 4. Salvation is a free gift, not by good works. You must take God’s word for it, and trust Jesus alone!

ພຣະທັມກິຈການ 4:12 ໃນຜູ້ອື່ນຄວາມລອດພົ້ນບໍ່ມີ ດ້ວຍວ່າບໍ່ມີນາມຊື່ອື່ນໃດທົ່ວໃຕ້ຟ້າ ທີ່ຊົງປະທານແກ່ມະນຸດ ເພື່ອໃຫ້ເຮົາທັງຫລາຍຕ້ອງໄດ້ພົ້ນ”

ພຣະທັມເອເຟໂຊ 2:8-9 ດ້ວຍວ່າລຶ້ງທ່ານທັງຫລາຍໄດ້ຖືກຊົງໂຜດໃຫ້ພົ້ນນັ້ນ ກໍຍ້ອນພຣະຄຸນດ້ວຍທາງຄວາມເຊື່ອ ສິ່ງເຫລົ່ານີ້ບໍ່ໃຊ່ພວກທ່ານເຮັດເອົາເອງ ແຕ່ພຣະເຈົ້າຊົງປະທານໃຫ້ ຄວາມພົ້ນນັ້ນບໍ່ໃຊ່ມີມາຍ້ອນການປະຕິບັດ ເພື່ອບໍ່ໃຫ້ຄົນນຶ່ງຄົນໃດອວດໄດ້

ພຣະທັມຕິໂຕ 3:5 ພຣະອົງໄດ້ຊົງໂຜດເຮົາທັງຫລາຍໃຫ້ພົ້ນ ບໍ່ແມ່ນຍ້ອນກິຈການອັນຊອບທັມທີ່ພວກເຮົາເອງໄດ້ເຮັດ ແຕ່ພຣະອົງໄດ້ຊົງພຣະກະຣຸນາຊໍາຣະໃຫ້ພວກເຮົາມີໃຈບັງເກີດໃຫມ່ ແລະຊົງສ້າງພວກເຮົາຂຶ້ນໃຫມ່ໂດຍພຣະວິນຍານບໍຣິສຸດ

## 5. We must put our faith and trust in Christ alone!

Mark 9:23 ພຣະເຢຊູຊົງກ່າວແກ່ພໍ່ນັ້ນວ່າ, "ຖ້າຊ່ອຍໄດ້" ຢາກເວົ້າດັ່ງນັ້ນຫລື ທຸກໆສິ່ງກໍເປັນໄປໄດ້ສຳລັບຜູ້ທີ່ເຊື່ອ"

Mark 1:15 ແລະຊົງບອກວ່າ, "ເວລາກຳນົດມາເຖິງແລ້ວ ຣາຊອານາຈັກຂອງພຣະເຈົ້າໄດ້ມາໃກ້ແລ້ວ ຈົ່ງຖິ້ມໃຈເກົ່າເອົາໃຈໃຫມ່ແລະເຊື່ອໃນຂ່າວປະເສີດ"

Mark 10:15 ເຮົາບອກທ່ານທັງຫລາຍຕາມຈິງວ່າ ຖ້າຜູ້ໃດບໍ່ຮັບຣາຊແຜ່ນດິນຂອງພຣະເຈົ້າເຫມືອນດັ່ງເດັກນ້ອຍ ຜູ້ນັ້ນຈະເຂົ້າໃນຣາຊແຜ່ນດິນນັ້ນບໍ່ໄດ້ຈັກເທື່ອ"

ພຣະທັມໂຣມ 10:9-10,13 ຄືວ່າຖ້າເຈົ້າຈະຮັບດ້ວຍປາກຂອງເຈົ້າວ່າ, "ພຣະເຢຊູຊົງເປັນອົງພຣະຜູ້ເປັນເຈົ້າ" ແລະເຊື່ອໃນຈິດໃຈວ່າ ພຣະເຈົ້າໄດ້ຊົງໂຜດບັນດານໃຫ້ພຣະອົງຊົງຄືນຂຶ້ນມາຈາກຕາຍແລ້ວເຈົ້າກໍຈະໄດ້ພົ້ນ ເຫດວ່າທີ່ມະນຸດໄດ້ເຊື່ອກໍເຊື່ອດ້ວຍໃຈຂອງຕົນ ຈຶ່ງໄດ້ຊົງຖືວ່າເປັນຄົນຊອບທັມ ແລະທີ່ໄດ້ຍອມຮັບກໍຍອມຮັບດ້ວຍປາກ ຈຶ່ງຖືກຊົງໂຜດໃຫ້ພົ້ນ ເພາະວ່າ, "ທຸກຄົນທີ່ຮ້ອງອອກພຣະນາມຂອງອົງພຣະຜູ້ເປັນເຈົ້າກໍຈະພົ້ນ"



**Put your faith in Christ alone!**

*If you want to accept Jesus Christ as your Savior and receive forgiveness from God, here is prayer you can pray. Saying this prayer or any other prayer will not save you. It is only trusting in Jesus Christ that can provide forgiveness of sins. This prayer is simply a way to express to God your faith in Him and thank Him for providing for your forgiveness.*

**"Lord,**

**I know that I am a sinner. I know that I deserve the consequences of my sin which is death and hell. However, I am trusting in Jesus Christ as my Savior. I believe that His death and resurrection provided for my forgiveness. I trust in Jesus and Jesus alone as my personal Lord and Savior. Thank you Lord, for saving me and forgiving me! Amen!"**